ກາເຟຊຸມຊົນແກ່ວແສດ
KEOSET COMMUNITY COFFEE

## ກາເຟຊຸມຊົນແກ່ວແສດ

# ຄູ່ມື
# ການຈັດການ ແລະ ປົວລະບັດຮັກສາຕົ້ນກາເຟ







## ພາກນຳສະເໜີ

ຄູ່ມືສະບັບນີ້ໄດ້ພັດທະນາຂຶ້ນບົນພື້ນຖານປະສົບການຈິງຂອງພວກເຮົາທີ່ເປັນຊາວສວນກາເຟຢູ່ໃນແຂວງຊຽງຂວາງ. ພວກເຮົາໄດ້ມີການປູກກາເຟຢູ່ຮົ່ມຂອງປ່າໄມ້ໃນເຂດກຸ່ມບ້ານແກ່ວແສດມາເກືອບ 20 ປີແລ້ວ. ໃນໄລຍະນັ້ນ ພວກເຮົາກໍ່ໄດ້ຮັບການແນະນຳດ້ານເຕັກນິກ ແລະ ການສະໜັບສະໜູນຈາກພາກລັດ, ບັນດາໂຄງການ ແລະ ບໍລິສັດ ແຕ່ວ່າຄວາມຮູ້ທີ່ເປັນປະໂຫຍດ ແລະ ທັກສະຕ່າງໆແມ່ນລ້ວນແຕ່ເກີດຈາກການເຮັດຕົວຈິງຂອງພວກເຮົາ ຊຶ່ງລວມມີການປູກ, ການເຮັດຝຸ່ນບົ່ມ, ການບົວລະບັດ-ຄຸ້ມຄອງສວນ, ການແປຮູບ, ການຕາກ ແລະ ການຈຳໜ່າຍກາເຟຂອງພວກເຮົາ.
ພວກເຮົາມີຄວາມປະສົງຢາກແບ່ງປັນປະສົບການທີ່ມີໃຫ້ແກ່ຊາວສວນ, ຊາວກະສິກອນອື່ນໆ ແລະ ພວກເຮົາກໍໄດ້ຕ້ອນຮັບແຂກຫຼາຍຮ້ອຍຄົນທີ່ມາຢ້ຽມຢາມເບິ່ງສວນກາເຟ ແລະ ສູນແປຮູບຂອງພວກເຮົາ. ຄູ່ມືສະບັບນີ້ແມ່ນເປັນການສັງລວມບັນດາເຕັກນິກທີ່ພວກເຮົາໄດ້ນຳໃຊ້ ແລະ ພວກເຮົາຂໍແນະນຳໃຫ້ທ່ານຄັດເລືອກ ແລະ ດັດປັບເຕັກນິກນີ້ໃຫ້ສອດຄ່ອງກັບເງື່ອນໄຂຕົວຈິງຂອງທ່ານ. ພວກເຮົາຫວັງຢ່າງຍິ່ງວ່າຂໍ້ມູນນີ້ຈະເປັນປະໂຫຍດຫຼາຍໃຫ້ແກ່ຜູ້ຜະລິດກາເຟອີກຫຼາຍທ່ານ.
ດ້ວຍຄວາມປາຖະໜາດີຂອງຊາວສວນກາເຟຈາກບ້ານປຽງ, ບ້ານຜາຮີ້ງ, ບ້ານປຸງ, ບ້ານຕັນໃຕ້ ແລະ ບ້ານຕັນເໜືອ.


## ຄຳຂອບໃຈ

ກົມສົ່ງເສີມເຕັກນິກ ແລະ ປຸງແຕ່ງກະສິກຳ (ກສປ), ກະຊວງກະສິກຳ ແລະ ປ່າໄມ້ ມີຄວາມຍິນດີທີ່ໄດ້ເຮັດວຽກຮ່ວມກັບຊາວສວນກາເຟຢູ່ເຂດກຸ່ມບ້ານແກ່ວແສດ. ວິທີການຜະລິດແບບກະສິກຳ-ປ່າໄມ້ ຫຼື ວັນນະກະສິກຳ ທີ່ນຳໃຊ້ໂດຍຊາວສວນເຫຼົ່ານີ້ແມ່ນເປັນຕົວຢ່າງທີ່ດີເລີດຂອງກະສິກຳສະອາດ ແລະ ການຜະລິດກະສິກຳທີ່ຍືນຍົງ ຕາມນະໂຍບາຍສົ່ງເສີມຂອງກະຊວງກະສິກຳ ແລະ ປ່າໄມ້, ພາຍໃຕ້ຂອບວຽກຍຸດທະສາດຂອງລັດຖະບານລາວໃນການເຕີບໂຕຕາມທິດສີຂຽວ. ມີຫຼາຍອົງການຈັດຕັ້ງທີ່ໄດ້ປະກອບສ່ວນເຮັດໃຫ້ເລື່ອງນີ້ມີຜົນສຳເລັດ ເປັນຕົ້ນແມ່ນໂຄງການບໍລິການສົ່ງເສີມກະສິກຳຮອບດ້ານ ຫຼື (LURAS) ຊຶ່ງໄດ້ຈັດຕັ້ງປະຕິບັດໂດຍ ອົງການ Helvetas ຮ່ວມກັບ ກົມສົ່ງເສີມເຕັກນິກ ແລະ ປຸງແຕ່ງກະສິກຳ ທີ່ໄດ້ຮັບທຶນສະໜັບສະໜູນໂດຍ ອົງການສະວິດຮ່ວມມືເພື່ອການພັດທະນາ (SDC).
ພວກເຮົາຂໍສະແດງຄວາມຂອບໃຈຢ່າງສູງຕໍ່ການຮ່ວມມືທີ່ດີຈາກພະແນກກະສິກຳ ແລະ ປ່າໄມ້ແຂວງຊຽງຂວາງ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງຄູນ ລວມທັງພາກເອກະຊົນ 2 ບໍລິສັດຄື: ກາເຟເມືອງຊຽງ (Muang Xieng Coffee) ແລະ ກາເຟຄອມມາ (Comma Coffee).
***ສິ່ງສຳຄັນທີ່ສຸດສຳລັບຄູ່ມືສະບັບນີ້ແມ່ນເປັນການສ້າງຂຶ້ນໂດຍຊາວກະສິກອນ ເພື່ອຊາວກະສິກອນເອງ, ນີ້ແມ່ນຄວາມຮູ້ຂອງພວກເຂົາເອງ.*** ກົມສົ່ງເສີມເຕັກນິກ ແລະ ປຸງແຕ່ງກະສິກຳມີຄວາມພາກພູມໃຈທີ່ສຸດໃນການເຮັດໜ້າທີ່ເປັນຜູ້ສັງລວມ ແລະ ແຈກຢາຍຄູ່ມືສະບັບນີ້.

ຫົວໜ້າ ກົມສົ່ງເສີມເຕັກນິກ ແລະ ປຸງແຕ່ງກະສິກຳ

ທອງສະຫວັນ ພົມທະລາວົງ

# ສາລະບານ

**1.** ການຈັດການ ແລະ ບົວລະບັດຮັກສາຕົ້ນກາເຟ ................................................ 1
**ກ.** ເງື່ອນໄຂທີ່ດີໃນການປູກກາເຟໃຫ້ມີຄຸນະພາບ ............................................ 1
**ຂ.** ການບົວລະບັດຮັກສາຜົນຜະລິດ ........................................................................ 2
**ຄ.** ການຕັດແຕ່ງຕົ້ນກາເຟ ...................................................................................... 3
**ງ.** ການຮັກສາຄວາມສະອາດ ແລະ ສະພາບແວດລ້ອມທີ່ດີໃຫ້ແກ່ສອນກາເຟ ............ 4
**ຈ.** ການຊ່ວຍຂະຫຍາຍຮາກກາເຟ ແລະ ການໃສ່ຝຸ່ນ ເພື່ອປ້ອງກັນດິນເສາະເຈື່ອນ ....... 5
**ສ.** ໄລຍະຫ່າງຂອງຕົ້ນກາເຟ ແລະ ການປູກແບບປະສົມປະສານໃນສອນກາເຟ ........... 6
**ຊ.** ການປູກກາເຟທົດແທນຕົ້ນທີ່ເສຍຫາຍ ................................................................ 7
**ຍ.** ການເພີ່ມຄວາມອຸດົມສົມບູນໃຫ້ແກ່ສອນກາເຟ ................................................. 9
**ດ.** ການກະກຽມວັດຖຸດິບເພື່ອເຮັດຝຸ່ນບົ່ມ ແລະ ສ່ວນປະສົມສານອາຫານອື່ນໆສຳລັບຕົ້ນກາເຟ ........................................................................................................ 10
**ຕ.** ການກະກຽມວັດຖຸດິບເພື່ອເຮັດຝຸ່ນນ້ຳ ............................................................ 11
**ຖ.** ສະໝຸນໄພຂ້າເພ້ຍກາເຟ ................................................................................. 12
**ທ.** ລະດັບຕົ້ນໄມ້ທີ່ປູກປະສົມປະສານກັບສອນກາເຟ ............................................. 13

# 1. ການຈັດການ ແລະ ບົວລະບັດຮັກສາຕົ້ນກາເຟ

## ກ. ເງື່ອນໄຂທີ່ດີໃນການປູກກາເຟໃຫ້ມີຄຸນະພາບ

### ແມ່ນຫຍັງຄືເງື່ອນໄຂທີ່ດີໃນການປູກກາເຟໃຫ້ມີຄຸນະພາບ



## ຂ. ການປົວລະບັດຮັກສາຜົນຜະລິດ

ຫຼັງຈາກສໍາເລັດການເກັບກູ້ໝາກກາເຟແລ້ວ, ຕ້ອງໄດ້ປິດໝາກທີ່ຄ້າງຢູ່ໃນຕົ້ນອອກໝົດບໍ່ໃຫ້ໝາກກາເຟເຫຼືອຄ້າງຢູ່ໃນຕົ້ນກາເຟ ເຊິ່ງເປັນສາເຫດໃນການນໍາເອົາໂຕມອດທີ່ຈະທໍາລາຍສວນກາເຟໃນໄລຍະຍາວ ຖ້າບໍ່ປ້ອງກັນແຕ່ຕອນຕົ້ນ.





## ຄ. ການຕັດແຕ່ງຕົ້ນກາເຟ



- ຕົ້ນສູງເກີນໄປ
- ງ່າທີ່ບໍ່ແຂງແຮງ + ແໜງເຮັດໃຫ້ໄດ້ຜົນຜະລິດໜ້ອຍ



- ຕັດຕົ້ນກາເຟໃຫ້ສູງປະມານ 2-2.5 ແມັດ



- ການຕັດແໜງ ຕ້ອງຕັດໃຫ້ຈໍາລໍາຕົ້ນ



- ການຕັດງ່າທີ່ບໍ່ແຂງແຮງ






- ລໍາຕົ້ນແຂງແຮງຂຶ້ນ
- ຜົນຜະລິດເພີ່ມຂຶ້ນ
- ໄດ້ຮັບແສງສະຫວ່າງຫຼາຍຂຶ້ນ

## ໆ. ການຮັກສາຄວາມສະອາດ ແລະ ສະພາບແວດລ້ອມທີ່ດີໃຫ້ແກ່ສວນກາເຟ










## ຈ. ການຊ່ວຍຂະຫຍາຍຮາກກາເຟ ແລະ ການໃສ່ຝຸ່ນ ເພື່ອປ້ອງກັນດິນເສາະເຈື່ອນ





- ບໍ່ສາມາດຮັກສາ ອາຫານ ແລະ ນໍ້າຢູ່ກ້ອງຕົ້ນກາເຟໄດ້
- ມີການເສາະເຈື່ອນເພີ່ມຂຶ້ນ






- ສາມາດຮັກສາ ຝຸ່ນ ແລະ ນໍ້າຢູ່ກ້ອງຕົ້ນກາເຟໄດ້
- ຕົ້ນ ແລະ ຮາກສາມາດເຕີບໂຕໄດ້ດີ






## ສ. ໄລຍະຫ່າງຂອງຕົ້ນກາເຟ ແລະ ການປູກແບບປະສົມປະສານໃນສວນກາເຟ




**ສະພາບປະຈຸບັນ**

- ຖ້າຕົ້ນກາເຟ ຫ່າງກັນເກີນໄປ ແມ່ນຈະເສຍເວລາໃນການເສຍຫຍ້າຫຼາຍຂຶ້ນເນື້ອທີ່ຫຼາຍ ແຕ່ສ້າງຜົນຜະລິດຕໍ່ເນື້ອທີ່ໄດ້ໜ້ອຍ
- ໄລຍະພໍດີ (ແຕ່ຢ່າໄກເກີນໄປ)
- ເພື່ອສະດວກໃນການບົວລະບັດຮັກສາ ແລະ ການເກັບໝາກ

**ໄລຍະຫ່າງຕົ້ນກາເຟ**

- ປູກເບ້ຍກາເຟ ໃນໄລຍະຫ່າງປະມານ 2 x 1.5 ແມັດ
- ການຮັກສາໄລຍະຂອງຕົ້ນຈະຊ່ວຍໃນການຄວບຄຸມການເກີດຂອງຫຍ້າໄດ້
- ການປູກພືດຄຸມດິນແມ່ນດີທີ່ສຸດ (ຕົວຢ່າງ: ອາຣາຊິດປິນຕອຍ)

**ການປູກແບບປະສົມປະສານ**

- ປູກປະສົມປະສານກັບພືດ ແລະ ຕົ້ນໄມ້ໃຫ້ໝາກຫຼາຍຊະນິດ (ຕົວຢ່າງ: ຕົ້ນໄມ້ໃຫ້ໝາກ) ໄລຍະຫ່າງປະມານ 3 ຫາ 6 ແມັດ
- ແຕ່ລະວັງຢ່າເລືອກພືດ ຫຼື ຕົ້ນໄມ້ທີ່ບໍ່ເປັນມິດກັບຕົ້ນກາເຟ

**ໄລຍະຫ່າງ + ຄວາມຫຼາກຫຼາຍໃນການປູກປະສົມປະສານ**





## ຊ. ການປູກກາເຟທົດແທນຕົ້ນທີ່ເສຍຫາຍ

➢ **ການປູກທົດແທນຕົ້ນເກົ່າ**

ບາງຄັ້ງເບ້ຍທີ່ປູກກ່ອນບໍ່ສົມບູນ, ເຕີບໂຕຊ້າ, ຕົ້ນຍັງນ້ອຍ ຫຼື ຕາຍແລ້ວ ຫຼື ເປັນໝາກໜ້ອຍ, ຖ້າພົບເຫັນຕົ້ນທີ່ຕິດພະຍາດ ຫຼື ຕາຍໃຫ້ຫຼົກອອກ ແລະ ຈູດຖິ້ມແລ້ວ ເອົາເບ້ຍໃນສວນກ້າມາປູກແທນຄືນໃສ່ໃນສວນກ້າ (ຕ້ອງໄດ້ກະກຽມເບ້ຍປະມານ 20% ເພື່ອປູກແທນຄືນຕົ້ນທີ່ບໍ່ສົມບູນດັ່ງທີ່ກ່າວມາຂ້າງເທິງ)



**ການປູກທົດແທນ**



## ➢ ການປູກເບ້ຍໃໝ່ (ຊ່ວງເລີ່ມຕົ້ນລະດູຝົນ)

1. ການເລືອກສະຖານທີ່/ຈຸດທີ່ເໝາະສົມ




2. ການຂຸດຂຸມເພື່ອກະກຽມປູກເບ້ຍ




3. ການປະສົມດິນປູກຝັງກັບຝຸ່ນບົ່ມໃນຂຸມ




4. ການເອົາດິນທີ່ປະສົມລົງຂຸມປະໄວ້ຈົນຮອດມື້ປູກ ແລະ ຮັກສາຄວາມຊຸ່ມ



5. ການປູກເບ້ຍໃສ່ຂຸມ




**<u>ໝາຍເຫດ:</u>** ເມື່ອປູກເບ້ຍກາເຟດິນຄວນຈະເປັນໂພນເລັກນ້ອຍ, ບໍ່ໃຫ້ດິນພຽງ ຫຼື ລຸບລົງ

## ຍ. ການເພີ່ມຄວາມອຸດົມສົມບູນໃຫ້ແກ່ສວນກາເຟ




### ການເອົາຝຸ່ນບົ່ມໃສ່ຕົ້ນກາເຟ

- ປະລິມານ 0.5 – 1 ກກ ຕໍ່ຕົ້ນແມ່ນພໍດີ
- ຢາຍຝຸ່ນບົ່ມໃສ່ອ້ອມຕົ້ນກາເຟທີ່ກຽມໄວ້ໃຫ້ເປັນວົງ ແລ້ວເອົາດິນໜ້າປະສົມກັບຝຸ່ນທີ່ໄດ້ຢາຍໃສ່, ດີທີ່ສຸດແມ່ນໃຫ້ໃສ່ຝຸ່ນບົ່ມກ່ອນຝົນຕົກຊ່ວງທຳອິດໃນໄລຍະເດືອນພຶດສະພາ - ມິຖຸນາ



ໄລຍະຫ່າງຂອງຝຸ່ນບົ່ມຫາຕົ້ນກາເຟແມ່ນຕາມລວງຍາວຂອງງ່າຕົ້ນກາເຟ ແລະ ເພີ່ມຫຍ້າແຫ້ງຕາມທຳມະຊາດປົກອອ້ມຝຸ່ນບົ່ມ

## ດ. ການກະກຽມວັດຖຸດິບເພື່ອເຮັດຝຸ່ນບົ່ມ ແລະ ສ່ວນປະສົມສານອາຫານສຳລັບຕົ້ນກາເຟ

### ການກະກຽມ ແລະ ການດູແລຮັກສາຝຸ່ນບົ່ມ

- **ປະເພດຂອງວັດຖຸດິບທີ່ຕ້ອງລວບລວມ**

| ປະເພດວັດຖຸດິບ | ເປີເຊັນ |
|---|---|
| ມູນສັດ (ຂີ້ສັດ)  | 30% |
| ເສດພືດແຫ້ງ, ວັດສະພືດ, ຂີ້ເລື່ອຍ(ໃຫ້ແຊ່ນ້ຳ ຫຼື ຫົດນ້ຳປະໄວ້ 1 ຄືນ)  | 35% |
| ພືດສີຂຽວ  | 35% |

- **ກະກຽມພື້ນທີ່ຝຸ່ນບົ່ມ**




- **ກະກຽມກອງຝຸ່ນບົ່ມທີ່ມີຊັ້ນຕໍ່ເນື່ອງ**




- **ການດູແລຮັກສາຝຸ່ນບົ່ມ**



## ៣. ການກະກຽມວັດຖຸດິບເພື່ອເຮັດຝຸ່ນນ້ຳ

ຝຸ່ນນ້ຳ = ນ້ຳສະກັດຈາກການໝັກ ແລະ ນ້ຳສະກັດຈາກການຕອງ

ໃຊ້ສຳຫຼັບ: ທົດເບ້ຍໄມ້ໃນສວນກ້າ ແລະ ເບ້ຍໄມ້ປູກໃໝ່, ທົດຕົ້ນໄມ້ທີ່ອ່ອນເພຍໃນສວນ, ສວນກ້າ ແລະ ພືດຜັກອື່ນໆ

➢ **ອຸປະກອນທີ່ຕ້ອງການ**



| ຖັງບັນຈຸ ຂະໜາດ 100 ລິດ | ນ້ຳທົ່ວໄປ | ໃບໄມ້ດິບ 10 ກິໂລ (ຕັດໃຫ້ມຸ່ນ) | ເປົາປ່ານ 1 ຖົງ | ມູນສັດ 6 ກິໂລ | ກ້ອນຫີນ 1 ກ້ອນ | ໄມ້ 1 ອັນ |
|---|---|---|---|---|---|---|

➢ **ການກະກຽມ**

**ຂັ້ນຕອນທີ1:** ເອົາໃບໄມ້ປະສົມ 10 ກິໂລ ແລະ ມູນສັດ 6 ກິໂລໃສ່ເປົາ




**ຂັ້ນຕອນທີ2:** ເອົາເປົາລົງໃສ່ຖັງ ແລ້ວເອົານ້ຳໃສ່ໃຫ້ຖ້ວມເປົາ



**ຂັ້ນຕອນທີ3:** ການໝັກ ແລະ ການຄົນ (ຂຶ້ນກັບອຸນຫະພູມ)




| ມື້ທີ 1 | ມື້ທີ 2 | ມື້ທີ 3 | ມື້ທີ 4 | ມື້ທີ 5 | ມື້ທີ 6 | ມື້ທີ 7 | ມື້ທີ 8 | ມື້ທີ 9 | ມື້ທີ 10 |
|---|---|---|---|---|---|---|---|---|---|
| ສຳເລັດການກະກຽມມື້ທຳອິດ  | ປະໄວ້ | ຄົນ ຝຸ່ນນ້ຳ  | ປະໄວ້ | ປະໄວ້ | ປະໄວ້ | ປະໄວ້ | ປະໄວ້ | ປະໄວ້ | ຄົນ ອີກຄັ້ງ  |

ເຮັດແບບເກົ່າ 3 ຫາ 6 ອາທິດ ( ຂຶ້ນກັບອຸນຫະພູມ)

## ຖ. ສະໝຸນໄພຂ້າເພ້ຍກາເຟ




ໝາກເຜັດຜົງ 1 ບ່ວງແກງ

ນ້ຳຢາລ້າງຈານ 1 ບ່ວງແກງ

ນ້ຳມັນພືດ (ນ້ຳມັນຖົ່ວເຫຼືອງ) 2 ບ່ວງແກງ

ນ້ຳດື່ມ 1 ລິດ

ຜະສົມສ່ວນຜະສົມທັງໝົດ

ສັ່ນໃຫ້ເຂົ້າກັນ ແລະ ປະໄວ້ 1 ຄືນ



ເພ້ຍຈະປ່ອຍຂອງເສຍ (ຍ່ຽວ) ເຊິ່ງຈະເຮັດໃຫ້ມົດມາຕອມຂອງເສຍດັ່ງກ່າວ, ເມື່ອສີດສະໝຸນໄພແລ້ວ ມົດບໍ່ສາມາດທຳລາຍຕົ້ນກາເຟ ແລະ ຈະບໍ່ກັບມາອີກຖ້າບໍ່ມີເພ້ຍ



ນຳເອົານ້ຳຢາມາໃສ່ຕຸກແລ້ວສີດໃສ່ແຕ່ງ່າທີ່ມີເພ້ຍຈັບຢູ່ເທົ່ານັ້ນ ຄວນສີດໃນເວລາຕອນເຊົ້າ ຫຼື ຕອນແລງ

### ທ. ລະດັບຕົ້ນໄມ້ທີ່ປູກປະສົມປະສານກັບສວນກາເຟ



# ປື້ມຄູ່ມືທີ່ໄດ້ຮັບການຈັດພິມ

1. ຄູ່ມືເຕັກນິກການກ້າເບ້ຍກາເຟ
2. ຄູ່ມືການຈັດການ ແລະ ບົວລະບັດຮັກສາຕົ້ນການເຟ
3. ຄູ່ມືການປຸງແຕ່ງ ແລະ ການຈັດປະເພດກາເຟ

ລາຍລະອຽດຂໍ້ມູນຕິດຕໍ່:

| ລ/ດ | ຊື່ ແລະ ນາມສະກຸນ | ໜ້າທີ່ຮັບຜິດຊອບ | ສະຖານທີ່ | ເບີໂທ |
|---|---|---|---|---|
| 1 | ນ ຈັນດີ ຄໍາອ້ອນ | ຫົວໜ້າກຸ່ມ | ບ້ານປ່ຽງ | 020 9720 4551 |
| 2 | ທ ໄຊເຮີຊີງ | ຫົວໜ້າກຸ່ມ | ບ້ານ ຜາຮີ້ງ | 030 228 2946 |
| 3 | ທ ຊາຍ ພີມມະໄຊ | ຫົວໜ້າເຕັກນິກ | ບ້ານ ຕົ້ນໃຕ້ | 030 229 4367 |
| 4 | ທ ໄລ ທຸມດາວົງ | ວິຊາການໜ່ວຍງານປູກຝັງ | ຫ້ອງການ ກະສິກໍາ ແລະ ປ່າໄມ້ ເມືອງຄູນ | 030 225 7597 |
| 5 | ນ ຈັນທະລີ ສີຟອງໄຊ | ວິຊາການຂະແໜງປູກຝັງ | ພະແນກ ກະສິກໍາ ແລະ ປ່າໄມ້ ແຂວງຊຽງຂວາງ | 020 5553 3278 |
| 6 | ທ ທອງໄຊ ຍິນດາລັດ | ວິຊາການສົ່ງເສີມ ກາເຟ | ໂຄງການ LURAS | 020 5542 9917 |

ສະໜັບສະໜູນໂດຍ:

ບໍລິການ-ສົ່ງເສີມກະສິກຳຮອບດ້ານ ບສກຮ

LURAS Lao Upland Rural Advisory Service